**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

ເລກທີ 408 /ຫຄຊກລ.ຄພ.
ນະຄອນຫລວງວຽງຈັນ, ວັນທີ: 25 ພຶດສະພາ 2023

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວ ຂອງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ປະຈຳແຂວງ ຄຳມ່ວນ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 0642/ຫຄຊກລ ລົງວັນ 10 ພຶດສະພາ 2023 ໃນວັນທີ 12 ຫາ 18 ພຶດສະພາ 2023, ໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບໂຄງການເກັບກູ້ລະເບີດແຫ່ງຊາດ ປະຈຳແຂວງ ຄຳມ່ວນ, ໄດ້ລົງເຄື່ອນໄຫວຊຸກຍູ້, ກວດກາຕິດຕາມການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດ ຢູ່ແຂວງ ຄຳມ່ວນ,

**ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນທະວີ ແກ້ວວິໄລ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
2. ທ່ານ ໄລທອງ ຂັນທາທິລາດ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
3. ທ່ານ ຂັນທະລີ ວຽນທະສິງ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
4. ທ່ານ ສັນຕິ ແກ້ວວິໄຊ ຂັບລົດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
5. ທ່ານ ເຂັມພອນ ພະສີວົງມີໄຊ ແພດ/ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
6. ທ່ານ ພອນພິລົມ ເຕໂຊ ວິຊາການ ຄຄກລ ແຂວງຄຳມ່ວນ;
7. ທ່ານ ໃອໂຍຊາ ພັນໂຊດ ວິຊາການ ຄຄກລ ແຂວງຄຳມ່ວນ.

**ຜູ້ຕິດຕາມຈາກ ຄກລ ແຂວງ ຄຳມ່ວນ:**

1. ທ່ານ ວັນໄຊ ວໍລະກຸມມານ ໜ່ວຍງານຄຸ້ມຄອງ - ກວດກາພາກສະໜາມ

## II. ຈຸດປະສົງໃນການຕິດຕາມກວດກາ

ເພື່ອຕິດຕາມກວດກາການປະຕິບັດງານແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການເຊັ່ນ: ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້, ທຳລາຍ ລບຕ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ປັບປຸງການປະຕິບັດງານ, ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ 2023, ເພື່ອຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

- **ຈຳນວນພະນັກງານ ແລະ ຄຸນວຸດທິພະນັກງານ**

ຄກລ ແຂວງຄຳມ່ວນ ມີພະນັກງານທັງໝົດ 181 ຄົນ ຍິງ 43 ຄົນ, ພະນັກງານຫ້ອງການມີ 17 ຄົນ, ຍິງ 05 ຄົນ, ພະນັກງານປະຈຳສະໜາມສະໜາມມີ 168 ຄົນ, ຍິງ 36 ຄົນ, ປະກອບທີມງານໂຄສະນາສຶກສາຄວາມສ່ຽງ 1 ທີມ, ສຳຫຼວດບໍ່ແມ່ນວິຊາການ 1 ທີມ, ສຳຫຼວດທາງດ້ານວິຊາການ 03 ທີມ, ກວດກູ້ມີ 09 ທີມ, ແມ່ບ້ານ ແລະ ນາຍຍາມ. ການປະກອບໂຄງຮ່າງຈັດການຕັ້ງແມ່ນຖືກຕ້ອງ ແລະ ວິຊາການເກັບກູ້ທັງໝົດທີ່ກ່າວມານັ້ນໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

- **ກວດກາລະບົບເອກະສານ**

ໂຄງການເກັບກູ້ລະເບີດ ແຂວງ ຄຳມ່ວນ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ ແບບຟອມຄວບຄຸ້ມຄຸນນະພາບພາຍໃນ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດ, ອາການແພ້ຕ່າງໆຂອງພະນັກງານ ແລະ ເອກະສານອື່ນໆເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກຳນົດໄວ້.

- **ການເຄື່ອນໄຫວຕາມແຜນປີ 2023.**

ໃນປີ 2023 ນີ້ ຄກລ ປະຈຳແຂວງຄຳມ່ວນ ໄດ້ເຄື່ອນໄຫວວຽກງານຢູ່ 4 ຕົວເມືອງຄື: ເມືອງມະຫາໄຊ, ໄຊບົວທອງ, ບົວລະພາ ແລະ ເມືອງຍົມມະລາດ, ຍັງມີເມືອງ ທີ່ສຳຮອງໄວ້ເພື່ອຈະເຄື່ອນໄຫວຄື ເມືອງທ່າແຂກ ແລະ ເມືອງຫີນບູນ, ອີງຕາມແຜນການເຄື່ອນໄຫວວຽກງານມີດັ່ງນີ້:

- ວຽກງານໂຄສະນາສຶກສາຄວາມສ່ຽງ ຕາມແຜນປີ 60 ບ້ານ, ປັດຈຸບັນປະຕິບັດໄດ້ 20 ບ້ານ;
- ວຽກງານສຳຫຼວດບໍ່ແມ່ນວິຊາການ ຕາມແຜນປີ 12 ບ້ານ, ປັດຈຸບັນປະຕິບັດໄດ້ 04 ບ້ານ;
- ວຽກງານສຳຫຼວດທາງດ້ານວິຊາການ ຕາມແຜນປີ ກຳນົດພື້ນທີ່ງຢືນຢັນວ່າອັນຕະລາຍ 33 ພື້ນທີ່, ປັດຈຸບັນປະຕິບັດໄດ້ 2,259,581 ຕາແມັດ;
- ວຽກງານກວດກູ້ພື້ນທີ່ ຕາມແຜນປີ 3,550,485 ຕາແມັດ, ປັດຈຸບັນປະຕິບັດໄດ້ 780,420 ຕາແມັດ;
- ວຽກງານທຳລາຍກໍ່ໄດ້ເຄື່ອນໄຫວເປັນປະຈຳຕາມການລາຍງານຂອງທ້ອງຖິ່ນແຕ່ບໍ່ໄດ້ກຳນົດໃສ່ແຜນປີ;

ການເຄື່ອນໄຫວວຽກງານຂອງ ຄກລ ແຂວງຄຳມ່ວນແມ່ນໄດ້ຮັບທຶນສະໜັບສະໜູນຈາກປະເທດສະຫາລັດອາເມລິກາ, ປັດຈຸບັນທາງ ຄກລ ແຂວງຄຳມ່ວນ ກຳລັງຈັດຕັ້ງທົດລອງການຄວບຄຸມຄຸນນະພາບພາຍໃນໂຄງການ, ໂດຍໄດ້ຈັດຕັ້ງໜ່ວຍງານຄຸ້ມຄອງ - ກວດກາພາກສະໜາມຂຶ້ນເພື່ອກວດກາຄຸນນະພາບພາຍໃນແຂວງ, ຖ້າໄດ້ຮັບຜົນດີເປັນທີ່ພໍໃຈກໍ່ຈະໄດ້ຂະຫຍາຍໄປຍັງແຂວງອື່ນໆທີ່ປະຕິບັດງານໂດຍ ຄກລ.

- **ການລົງຕິດຕາມຢູ່ພາກສະໜາມ**

ລົງຊຸກຍູ້ຕິດຕາມສະໜາມທີ່ກຳລັງປະຕິບັດຢູ່ບ້ານນາປາງ, ເມືອງບົວລະພາ, ທີມງານກວດກູ້ AC05 & TS01 ການຕິດຕາມແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ, ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້,ທຳລາຍ ລບຕ, ໃຫ້ມີປະສິດທິພາບ, ມີຄວາມປອດໄພ, ທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ຍັງໄດ້ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວຈຳນວນ 10 ສະໜາມ ເຊິ່ງມີເນື້ອທີ່ທັງໝົດ 330,238 ຕາແມັດ, ຄວບຄຸມຄຸນນະພາບຫຼາຍກວ່າ 2% ເທົ່າກັບ 7800 ຕາແມັດ, ຢູ່ເມືອງໄຊບົວທອງ, ມະຫາໄຊ ແລະ ເມືອງຍົມມະລາດ ເພື່ອເປັນການຢັ້ງຢືນສະໜາມດັ່ງກ່າວມີຄຸນນະພາບ, ມີຄວາມປອດໄພຕໍ່ຜູ້ນຳໃຊ້ເນື້ອທີ່ດິນ.

ການລົງກວດກາຄວບຄຸມຄຸນນະພາບຂອງທີມງານເຫັນວ່າ ມີ 1 ສະໜາມແມ່ນບໍ່ຜ່ານການຢັ້ງຢືນຄຸນນະພາບຄື: ສະໜາມບ້ານຜານາງ ເມືອງມະຫາໄຊ Task ID: UXO Lao-AC-2023-1202006-001 ເນື້ອທີ່ **30,599** ຈຸດພິກັດ UTM 48Q 519690 1918169, ສະໜາມນີ້ແມ່ນກວດພົບເສດເຫຼັກໃນຈຸດດຽວເປັນຈຳນວນຫຼາຍ ຖ້າເອົາມາໂຮມກັນແລ້ວທຽບໃສ່ເຄິ່ງບົມບີ ແມ່ນໃຫຍ່ເກີນມາດຕະຖານແຫ່ງກຳນົດ.

## III. ຜົນການກວດກາ

ຜ່ານການລົງຕິດຕາມກວດກາຂອງຄະນະທີມງານສັງເກດເຫັນໄດ້ດັ່ງນີ້:

- **ຈຸດດີ.**

1. ການປະຕິບັດງານຂອງ ຄກລ ແຂວງຄຳມ່ວນ ໄດ້ເຄື່ອນໄຫວວຽກງານພາຍໃຕ້ລະບຽບຕາມມາດຕະຖານການປະຕິ ບັດງານ ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.
2. ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
3. ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

4. ສະໜາມເກັບກູ້ທີ່ສຳເລັດແລ້ວແມ່ນຜ່ານຂະບວນການຄວບຄຸມຄຸນນະພາບບໍ່ພົບເສດເຫຼັກໃຫຍ່ກວ່າເຄິ່ງ ½ blu26, ສະໜາມດັ່ງກ່າວແມ່ນມີຄວາມປອດໄພສາມາດນຳໃຊ້ເນື້ອທີ່ດິນຕາມຈຸດປະສົງ ໃນຄວາມເລິກຂອງລະບຽບການເກັບກູ້ 25 ຊັງຕີແມັດ.

5. ການນຳສະເໜີລາຍງານຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ, ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ, ສະຖານທີ່ປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະ ເບີດທີ່ເຄື່ອນຍ້າຍໄດ້, ສິ່ງທີ່ກ່າວຂ້າງເທິງມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດ.

– **ຂໍ້ຄົງຄ້າງ.**

1. ຫົວໜ້າທີມງານ AC05 ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນກ່ຽວກັບການລາຍງານສະພາບສະໜາມ, ການເຄື່ອນໄຫວວຽກງານຂອງຕົນ ຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ ( ການນຳສະເໜີບໍ່ໄປຕາມຂັ້ນຕອນ, ບໍ່ຊັດເຈນ ແລະ ການເວົ້າຍັງບໍ່ເຂັ້ມແຂງ ) ແນະນຳໃຫ້ຫົວໜ້າທີມພະຍາຍາມປັບປຸງ ແລະ ຖອດຖອນບົດຮຽນນຳໝູ່ເພື່ອນ.

2. ການບັນທຶກຂອງແພດສະໜາມ AC05 ກ່ຽວກັບການຮັບ ເວົ້າລວມອຸປະກອນການແພດເຫັນວ່າຍັງບໍ່ຖືກຕ້ອງຕາມຮັບອຸປະກອນຕົວຈິງ, ອຸປະກອນການແພດທີ່ທີ່ຂາດເຂີນຍັງບໍ່ໄດ້ຮັບການແກ້ໄຂ; ສະເໜີໃຫ້ຫົວໜ້າແພດ ແລະ ແພດສະໜາມນຳສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ຈັດສັນໃຫ້ຄົບຕາມລາຍການອຸປະການແພດທີ່ໄດ້ກຳນົດໄວ້ໃນ SOP ຂອງ ຄກລ.

3. ສະເໜີໃຫ້ຫ້ອງການໃຫຍ່ ຄກລ ລົງກວດກາສືບສວນ 2 ສະໜາມທີ່ບໍ່ຜ່ານການຄວບຄຸມຄຸນນະພາບພາຍນອກຂອງທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໃນປີ 2022 ແລະ ໃນຄັ້ງນີ້ອີກ 1 ສະໜາມແມ່ນບໍ່ຜ່ານການຢັ້ງຢືນຄຸນນະພາບ, ເມື່ອກສຳເລັດແລ້ວໃຫ້ໜ່ວຍງານທີ່ລົງກວດກາເຮັດບົດລາຍງານມາຍັງຫ້ອງການ ຄຊຫລ ເພື່ອຮັບຊາບ.

4. ສະເໜີໃຫ້ໜ່ວຍງານຄຸ້ມຄອງ - ກວດກາສະໜາມ ປະຕິບັດຕາມມາດຕະຖານປະຕິບັດງານ SOP ບົດທີ6 ວ່າດ້ວຍການຄວບຄຸມ ແລະ ການຄ້ຳປະກັນຄຸນນະພາບ ແລະ ມາດຕະຖານແຫ່ງຊາດ NS ທີ່ລະບຸໄວ້ໃນບົດທີ 19 ວ່າດ້ວຍການຄຸ້ມຄອງຄຸນນະພາບ, ຖ້າກວດພົບເສດເຫຼັກ ຫຼື ສະເກັດນ້ອຍທີ່ພົບໃນຈຸດດຽວເມື່ອທ້ອນໂຮມກັນແລ້ວ ໃຫຍ່ເທົ່າກັບເຄິ່ງໜຶ່ງຂອງ ບົມບີ26 ແມ່ນບໍ່ຜ່ານການຢັ້ງຢືນຄຸນນະພາບ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອຊາບ.

**ຫົວໜ້າຫ້ອງການ ຄຊກລ.** | **ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ.**

ຫ້ອງການ ຄຊກລ

**ດວງສີ ທຳມະວົງ**

ບ່ອນສົ່ງ:

ສົ່ງ ໂຄງການເກັບກູ້ລະເບີດແຫ່ງຊາດ 1 ສະບັບ ເພື່ອລາຍງານ.

ສົ່ງ ຄກລ ແຂວງ ສາລະວັນ 1 ສະບັບ ເພື່ອຈັດຕັ້ງປະຕິບັດ.

ຫ້ອງການ ຄຊກລ ເພື່ອເກັບມ້ຽນ 1 ສະບັບ.ຫ້ອງການ ຄຄກລຂ ເກັບມ້ຽນ 1 ສະບັບ ເພື່ອລາຍງານ.ບ້ານ ທົ່ງສ້າງນາ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,

ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la